# ເລື່ອງ
# ຜີຍ່າມອຍ

ຂຽນໂດຍ ລູກສາວ
ເມືອງພວນ

ແຕ້ມໂດຍ ສິນໄຊ
ກອງພາລີ






ປື້ມຫົວນີ້ສາມາດພິມອອກໄດ້ ກໍ່ຍ້ອນການສະ
ໜັບສະໜູນຂອງ ລິນ ພາລເມີ ປະເທດອັງກິດ.
ຂໍຂອບໃຈຫຼາຍໆ!

This publication of this book was made possible by a donation from Lin Palmer of England. Thank you!


ພວກເຮົາມີປື້ມຫຼາຍຫົວພ້ອມທີ່ຈະພິມອອກສູ່ສັງຄົມລາວ ແຕ່ພວກເຮົາ
ພັດບໍ່ມີຜູ້ອຸປະຖໍາພຽງພໍ. ຂໍໃຫ້ທ່ານຊ່ວຍອຸປະຖໍາຈະໄດ້ບໍ່?

We have other books ready to print, as soon as they have a sponsor.
Can you help?

www.BigBrotherMouse.com

**ຜີຍ່ານອຍ**


ຂຽນໂດຍ: ລູກສາວເມືອງພວນ
ແຕ້ມໂດຍ: ສິນໄຊ ກອງຜາລີ



ສະຫງວນລິຂະສິດບົດຂຽນ © 2009 ລູກສາວເມືອງພວນ
ສະຫງວນລິຂະສິດຮູບແຕ້ມ © 2009 ສິນໄຊ ກອງຜາລີ



ຈັດພິມໂດຍ: ຮ້ານປື້ມອ້າຍໜູນ້ອຍ, ຫຼວງພະບາງ.
ທະບຽນອະນຸຍາດ: ລທບ 229/19122008 ພິມຄັ້ງທີ 1
ພິມທີ່ ໂຮງພິມ ເອສ ເອັມ ພີ ການພິມ, ວຽງຈັນ, 2009. ຈຳນວນ 6000 ຫົວ

# ເລື່ອງ
# ຜີຍ່າມອຍ



ຂຽນໂດຍ: ລູກສາວເມືອງພວນ
ແຕ້ມໂດຍ: ສີນໄຊ ກອງຜາລີ



ປື້ມອ່ານງ່າຍ ແລະ ມ່ວນຂອງອ້າຍໜູນ້ອຍ



ກາລະຄັ້ງໜຶ່ງນານມາແລ້ວ ມີຊາຍຄົນໜຶ່ງໄປໃສ່ໄຊຢູ່ນ້ຳຫ້ວຍໃກ້ໆກັບທົ່ງນາ ແຕ່ລະມື້ລາວຕື່ນແຕ່ເຊົ້າມືດເພື່ອໄປຢາມໄຊຫວັງຈະເອົາປາມາເຮັດກັບເຂົ້າສວາຍກິນເໝືອນກັບແຕ່ລະວັນ.

ມີມື້ໜຶ່ງ ພໍລາວໄປຮອດບ່ອນທີ່ລາວໃສ່ໄຊໄວ້ ບັງເອີນເຫັນຮອຍຕີນນ້ອຍໆວົນວຽນຢູ່ບ່ອນທີ່ລາວເຄີຍຖອກປາ ລາວຈຶ່ງຄິດສົງໄສວ່າ: "ເດັກນ້ອຍມາແຕ່ໃສຍາມເຊົ້າຍັງມືດໆຢູ່ປານນີ້."

ລາວຄິດຢູ່ຄາວໜຶ່ງ "ມັນແມ່ນໃຜກະຊ່າງເທາະ!"

ພໍມາເບິ່ງໄຊພັດບໍ່ມີປາຈັກໂຕ ລາວກໍ່ເລີຍຈົ່ມວ່າ: "ອົດບໍ່ໄດ້ແລ້ວຕົນເອງເປັນຄົນໃສ່ໄຊແທ້ໆພໍແຕ່ຖືກປາຫຼາຍໝູ່ຊ້ຳພັດມາລັກຢາມເອົາໄປກິນກ່ອນເສີຍ ເຮົາຕ້ອງຮູ້ໃຫ້ໄດ້ວ່າຜູ້ນັ້ນແມ່ນໃຜ" ວ່າແລ້ວຊາຍຄົນນັ້ນກໍ່ກັບບ້ານໂດຍບໍ່ໄດ້ປາຈັກໂຕ.

ມື້ຕໍ່ມາລາວກໍ່ລົງເຮືອນແຕ່ໄກ່ຂັນກົກພຸ້ນ ລາວໄປຮອດບຶດໜຶ່ງກໍ່ເຫັນຍ່າມອຍເປັນຄືເດັກນ້ອຍຍ່າງມາ

ຫາບ່ອນໃສ່ໄຊ ແລ້ວມັນກໍ່ຈັບໄຊຍົກຂຶ້ນ, ຊາຍຄົນນັ້ນຫຼຽວ ເຫັນຄົນທີ່ມາລັກເອົາປາຂອງຕົນຢ່າງໜ້າຕາເສີຍກໍ່ຄຶດໂມ ໂຫສຸດໆ ພ້ອມທັງຮ້ອງໃສ່ວ່າ: “ໂອ.. ໂອ່..! ມຶງນີ້ ນໍ...ມາຢາມ ເອົາປາກູແຕ່ລະມື້, ມື້ນີ້ແຫຼະ ມຶງຈະຕ້ອງຕາຍ, ໂຕນ້ອຍໆ ແນວນີ້ ເປັນຫຍັງຈິ່ງບໍ່ຢ້ານຕາຍ ເຊົ້າມືດຈືດຕາປານນີ້ກໍ່ ຍັງມາລັກຂອງຄົນອື່ນ” ລາວທັງເວົ້າທັງໂດດໄປຈັບເອົາຢ່າ ມອຍໂຕນ້ອຍໆ ຫວັງຈະສັ່ງສອນໃຫ້ເຂັດຫຼາບ.





ແຕ່ຍ່ານອຍມີແຮງກວ່າຈຶ່ງຈັບລາວທັ່ງລົງດິນຈົນຫຼຸບລົງພຽງຫົວເຂົ່າ, ແລ້ວມັນກໍ່ເວົ້າວ່າ: ເຈົ້າຈະຢູ່ທີ່ນີ້ ຫຼື ຈະໄປເປັນຜົວຂ້ອຍ. ຊາຍຄົນນັ້ນບໍ່ມີແຮງພໍທີ່ຈະດຶງຂາຕົວເອງອອກຈາກດິນໄດ້ ລາວບໍ່ຮູ້ຈະເຮັດແນວໃດເພາະຢ້ານຍ່ານອຍດຶງໄສ້ອອກມາກິນ, ລາວກໍ່ເລີຍຕອບຍ່ານອຍວ່າ: "ຖ້າຂ້ອຍ



ຕົກລົງເປັນຜົວເຈົ້າແລ້ວເຈົ້າຈະບໍ່ຂ້າຂ້ອຍແມ່ນບໍ? ເອົາຂ້ອຍອອກຈາກດິນກ່ອນ ແລະຂ້ອຍຈະຕົກລົງເປັນຜົວເຈົ້າ" ຊາຍຄົນນັ້ນເວົ້າດ້ວຍຄວາມຖ່ອມຕົວເພາະຢ້ານຕາຍ ຍ່າມອຍກໍ່ດຶງລາວຂຶ້ນຈາກດິນແລ້ວພາໄປຢູ່ຖໍ້າຂອງມັນ.

ເວລາເຫິງນານທີ່ ຍ່າມອຍກັບຄົນໃຊ້ຊີວິດເປັນຜົວເມຍຈົນມີລູກນ້ອຍດ້ວຍກັນ, ຍ່າມອຍ ຮ້ອງຊື່ຜົວວ່າພໍ່ໜອຍ ສ່ວນຜົວກໍ່ຮ້ອງເມຍວ່າ ແມ່ໜອຍ. ຍ່າມອຍ ຫຼື ແມ່ໜອຍຈະອອກໄປຫາກິນແຕ່ລະເທື່ອກໍ່ບອກຜົວວ່າ: "ພໍ່ໜອຍເອີຍ! ຂ້ອຍອອກໄປຫາກິນບຶດໜຶ່ງຈະກັບມາເດີ." ແຕ່ແມ່ໜອຍກໍ່ໄປຈົນມືດຈຶ່ງກັບຖໍ້າ, ມື້ຕໍ່ມາລາວໄປອີກ ແລະບອກຜົວວ່າ: "ພໍ່ໜອຍເອີຍ! ມື້ນີ້ຂ້ອຍໄປຫາ



ກິນດີນໆເດີ້ຂ້ອຍຈຶ່ງຈະກັບ” ຍ່ານອຍສັ່ງຜົວ.

ຊາຍຄົນນັ້ນໃຊ້ຊີວິດຢູ່ກັບຍ່ານອຍດ້ວຍຄວາມກະວົນກະວາຍ, ເພາະມັນຕ່າງຊາດຕ່າງພາສາ ເຮັດໃຫ້ລາວຄິດແລ້ວກໍ່ຄິດອີກວ່າຈະຫາວິທີ

ອອກຈາກຖ້ຳນີ້ໄດ້ແນວໃດ.

ຍ່ານອຍອອກໄປແຕ່ລະມື້ລາວກໍ່ເອົາກ້ອນຫີນໃຫຍ່ອັດປາກຖ້ຳໄວ້ຢ່າງແໜ້ນໜາ ແມ່ນແຕ່ຮູຫຼີມຫົວຫຼີມຕີນພໍໃຫ້ເຫັນແສງສະຫວ່າງກໍ່ບໍ່ມີ, ລາວຄິດຕຶກຕອງທັງສັງເກດເວລາຍ່ານອຍອອກຈາກຖ້ຳໄປຫາກິນ.

ວັນໜຶ່ງໃນຂະນະທີ່ກຳລັງກິນເຂົ້າແລງ ຊາຍຄົນນັ້ນກໍ່ຕັ້ງຄຳຖາມຂຶ້ນວ່າ: "ແມ່ໜອຍເອີຍ ລູກເຮົາກໍ່ໄດ້ຫຼາຍ







ເດືອນແລ້ວ ຂ້ອຍຢາກພາລູກນ້ອຍຂອງ
ເຮົາໄປຕາກອາກາດສົດຢູ່ນອກຖ້ຳ, ເວລາ
ເຈົ້າໄປຫາຢູ່ຫາກິນ ຂ້ອຍເບື່ອຢູ່ໃນຖ້ຳ
ຫຼາຍ ແຕ່ຂ້ອຍບໍ່ມີແຮງຈະຊຸກກ້ອນຫີນ
ໃຫຍ່ອອກຈາກປາກຖ້ຳໄດ້.

ຍ່າມອຍໄດ້ຍິນຜົວເວົ້າແນວນັ້ນກໍ່ເລີຍ
ເວົ້າວ່າ: "ຊິຢາກຫຍັງ ເຈົ້າກໍ່ເອົາມືລູກ
ນ້ອຍຍູ້ອອກກະໄດ້ລະບໍ? ລູກນ້ອຍມີແຮງ
ຄືກັບຂ້ອຍນີ້ແຫຼະ" ຍ່າມອຍເວົ້າແລ້ວກໍ່
ອອກໄປຫາກິນຄືກັບທຸກໆວັນທີ່ຜ່ານມາ.



ຊາຍຄົນນັ້ນໄດ້ຍິນແນວນັ້ນກໍ່ຈື່ໄວ້ ແລະກໍ່ຄິດວ່າ: ບາດນີ້ແຫຼະກູຕ້ອງອອກໄປໄດ້. ວັນຮຸ່ງຂຶ້ນ ຍ່າມອຍບອກກັບຜົວວ່າ: “ພໍ່ໜອຍເອີຍ! ຂ້ອຍຈະໄປບຶດໜຶ່ງແລ້ວຈະມາເດີ.”

ພໍ່ໜອຍກໍ່ດີໃຈ ແລະ ຟ້າວຮ້ອງຕອບໄປວ່າ: “ເອີ! ບໍ່ເປັນຫຍັງດອກ ຂ້ອຍຈະເບິ່ງລູກນ້ອຍເອງ ຫາກິນໃຫ້ໄດ້ຫຼາຍໆເພື່ອລູກນ້ອຍຂອງເຮົາເດີ”.

ພໍຍ່າມອຍຍ່າງອອກຈາກຖໍ້າໄປໄດ້ຊົ່ວໄລຍະໜຶ່ງ ຊາຍຄົນນັ້ນກໍ່ອູ້ມເອົາລູກນ້ອຍໄປຫາປາກຖໍ້າ ແລະປະຕິບັດຕາມແຜນທີ່ຄິດໄວ້. ລາວອອກຈາກຖໍ້າຢ່າງງ່າຍດາຍ, ແລ້ວກໍ່ຕັ້ງໃຈແລ່ນໜີໃຫ້ໄວເທົ່າທີ່ຈະໄວໄດ້. ລາວແລ່ນໄປຕາມດົງຕາມປ່າໄວເທົ່າໃດກໍ່ຍັງບໍ່ພົ້ນເຂດແດນອັນຕະລາຍ ເມື່ອຍ່າມອຍກັບເຂົ້າມາໃນຖໍ້າກໍ່ເຫັນແຕ່ລູກນ້ອຍນອນຢູ່ຄົນດຽວ ເຫັນປາກຖໍ້າເປີດໄວ້.

ຍ່າມອຍຄິດວ່າອັນຕະລາຍມາເຖິງຜົວຕົວເອງຈຶ່ງຟ້າວແລ່ນຊອກຫາທົ່ວທຸກບ່ອນບໍລິເວນໃກ້ໆຖໍ້າ

ແຕ່ກໍ່ບໍ່ມີຮ່ອງຮອຍທີ່ຈະພົບ ຍ່າມອຍແລ່ນຕາມປ່າດົງທັງຮ້ອງວ່າ: "ພໍ່ໜອຍເອີຍ ພໍ່ໜອຍ..! ເຈົ້າຢູ່ໃສແມ່ໜອຍມາແລ້ວ."

ຍ່າມອຍຮ້ອງໄປຕາມທາງທີ່ລາວເຄີຍພາຊາຍຄົນນັ້ນມາ



ທີ່ຖ້ຳ, ເມື່ອມາເຫັນຮອຍຕີນຂອງຄົນ ຍ່າມອຍກໍ່ຍິ່ງຮ້ອງດັງໆ, ພໍພໍ່ໜອຍໄດ້ຍິນສຽງກໍ່ຕົກໃຈຟ້າວຫາທີ່ຊ່ອນໂຕ, “ໂອ..! ມັນນຳກູມາແລ້ວ ຕາຍແທ້ໆບາດນີ້ເຮົາຈະລີ້ຢູ່ບ່ອນໃດມັນຈຶ່ງຈະບໍ່ເຫັນ” ລາວທັງແລ່ນທັງງວາກພຸ້ນງວາກພີ້ຊອກຫາບ່ອນລີ້, ຈົນລາວຫຼຽວເຫັນຂຸມຄົນຂຸດມັນປ່າເກົ່າ ລາວກໍ່ເອົາຫົວຊຸບລົງຂຸມກົ້ນຊີ້ເງົ່າເດ່ຢູ່ນອກ.



ເມື່ອຍ່ານອຍມາເຫັນກໍ່ຄິດວ່າຜີວຕາຍແລ້ວ, ລາວນັ່ງເຝົ້າທັ້ງໄຫ້ທັ້ງຈົ່ມນຳວ່າ: “ພໍ່ໜອຍເອີຍ! ເຈົ້າຕາຍລະນໍ, ຂ້ອຍຈະກັບໄປເອົາເງິນເອົາຄຳມາໃຫ້ເຈົ້າເດີ”

ຍ່ານອຍເວົ້າແລ້ວກໍ່ເອົາມີເດ່ໄປຄວັກກົ້ນຜີວເລີຍເຮັດໃຫ້ພໍ່ໜອຍ ຕົດ ຊູດ... ອອກຄ່ອຍໆ ຍ່ານອຍໄດ້ກິ່ນຕົດກໍ່ຄິດວ່າຜີວຕົວເອງເໝັນ ແລ້ວຈຶ່ງຈົ່ມຂຶ້ນວ່າ: “ພໍ່ໜອຍເອີຍ! ເຈົ້າເໝັນ



ແລ້ວນໍຕາຍບຶດດຽວກໍ່ເຫັນແລ້ວ ເຈົ້າຖ້າຂ້ອຍຢູ່ນີ້ເດີ" ວ່າ ແລ້ວຍ່າມອຍກໍ່ກັບໄປຖ້ຳເອົາເງິນຄໍາເອົາໝໍ້ສີ່ຫູມາກອງໄວ້ ເຕັ້ມຂ້າງຂອງພໍ່ໜອຍພ້ອມທັງສັ່ງວ່າ: "ພໍ່ໜອຍເອີຍ! ເຈົ້າຢາກໄດ້ເງິນຄໍາໃຫ້ເຈົ້າຄືນໄປເບື້ອງຂວາ ເຈົ້າຢາກກິນປາໃຫ້ຄືນໄປເບື້ອງຊ້າຍ" ເວົ້າຈົບແລ້ວຍ່າມອຍກໍ່ໜີໄປ.



ພໍ່ຊາຍຄົນນັ້ນອອກຈາກຂຸມຂຶ້ນມາກໍ່ເຫັນໝໍ້ສີ່ຫູກັບຂີງ, ລາວເອົາເຄື່ອງແລ້ວກໍ່ກັບບ້ານໄປ. ນັບແຕ່ນັ້ນມາລາວກໍ່ກາຍເປັນຄົນຮັ່ງມີຊ່າລືກັນໄປທົ່ວບ້ານທົ່ວເມືອງວ່າຮັ່ງມີຍ້ອນໄປໃສ່ໄຊຢູ່ຫ້ວຍນໍ້າແຄມນາ.





ກ່າວເຖິງສ່ຽວຮັກສ່ຽວແພງກັນແຕ່ຍັງນ້ອຍ, ຜໍໄດ້ຍິນວ່າສ່ຽວຮັ່ງມີລ້ຳລວຍຫຼາຍ ໝູ່ຄົນນັ້ນຈຶ່ງມາຫາເພື່ອຢືມໝໍ້ສີ່ຫູໄປ, "ໂອ້..! ສ່ຽວເອີຍເຮົາເຫັນໂຕລ້ຳລວຍຫຼາຍຈຶ່ງມາຫາ ເຮົາກໍ່ຢາກມີຢູ່ມີກິນຄືໝູ່, ຊ່ວຍເຮົາໃຫ້ມີເງິນມີຄຳຄືໂຕແດ່ ເຮົາຍາກຈົນຂາດເຂີນມາດົນນານແລ້ວ" ຜູ້ເປັນສ່ຽວເຫັນເພື່ອນມີຄວາມຫຍຸ້ງຍາກຂາດເຂີນກໍ່ເອົາໃຫ້ຢືມ.





ພໍ່ສ່ຽວຮັບເອົາໝໍ້ໄປເຖິງເຮືອນ ກໍ່ປະຕິບັດຕາມທີ່ສ່ຽວແນະນຳ ລາວເປັນຄົນໂລບມາກໂລພາຢາກໄດ້ຫຼາຍກວ່າສ່ຽວຕົນເອງຈຶ່ງເວົ້າຂຶ້ນວ່າ: “ໂອຍ..! ບາດນີ້ກູໄດ້ແລ້ວຈະຄົນເອົາໃຫ້ສົມໃຈກູ ເກີນວ່າມັນທຸກມັນຈົນໂພດ” ວ່າແລ້ວລາວກໍ່ດັງໄຟຄ້າງໝໍ້ໃສ່.

“ຄົນໄປເບື້ອງຂວາກ່ອນເພື່ອເອົາເງິນຄຳ ແລ້ວກູຈຶ່ງຈະຄົນເອົາເຂົ້າເອົານ້ຳເອົາຊີ້ນເອົາປາ” ຈາກນັ້ນລາວກໍ່ຄົນເອົາ





ເງິນເອົາຄຳ, ເງິນຄຳກໍ່ຂຶ້ນມາເປັນກອງຈົນໜັ້ນແຕກເຄິ່ງ ແລ້ວເງິນຄຳກໍ່ຫາຍໄປໝົດ.

ລາວທຸກຈົນຄືເກົ່າຍ້ອນຄວາມໂລບມາກໂລພາຂອງຕົນເອງ, ພ້ອມທັງເສຍໃຈທີ່ເຮັດເຄື່ອງຂອງຄົນອື່ນເສຍຫາຍ, ລາວເສົ້າໃຈກັບໄປຫາສ່ຽວແລ້ວເລົ່າສູ່ຟັງ, “ສ່ຽວເອີຍ..!





ເຮົາຈະຊອກວິທີໃດ ເພື່ອເອົາໝັ້ນມາສິ່ງ
ຄືນໃຫ້ໂຕໄດ້?”

ເມື່ອໄດ້ຍິນແນວນັ້ນ ຜູ້ເປັນສ່ຽວກໍ່
ຕອບວ່າ: “ມີວິທີດຽວຄືໄປໃສ່ໄຊ ບາງ
ເທື່ອໂຕອາດໂຊກດີຈະໄດ້ໝັ້ນສີ່ຫູມາ
ແທນເຮົາ” ທາງສ່ຽວໄດ້ຟັງກໍ່ຟ້າວຈັດ
ແຈງຕາມຄຳແນະນຳ.

ຍ່ານອຍກໍ່ອອກມາເອົາປາຢູ່ໃນໄຊຂອງລ່ຽວໂລບມາກ ໂລພາຜູ້ນັ້ນ, ພໍລາວເຫັນກໍ່ຟ້າວກະໂດດໄປໃສ່ ແຕ່ກໍ່



ຖືກຍ່ານອຍ ຈັບທັ່ງລິງດິນຄືກັບ
ເພື່ອນແນະນຳແທ້, ມັນຫວັງຈະກິນ
ເປັນອາຫານ ຊາຍຄົນນັ້ນກໍ່ຂໍໃຫ້ໄວ້
ຊີວິດ ແລະຍອມໄປເປັນຜົວ ຍ່ານອຍ
ກໍ່ດີໃຈທີ່ໄດ້ຜູ້ຊາຍມາເປັນຜົວ.



ວັນເວລາຜ່ານໄປ ຍ່າມອຍຂັງຜົວໄວ້ໃນຖໍ້າເໝືອນເດີມ, ລາວນັ່ງຄຶດຕຶກຕອງຢູ່ຄົນດຽວວ່າ: "ກູມາຢູ່ທີ່ນີ້ກໍ່ດົນນານແລ້ວຈະເຮັດວິທີໃດຈຶ່ງຈະເອົາໝໍ້ສີ່ຫູໄປແທນສ່ຽວໄດ້, ເວລານີ້ຍ່າມອຍບໍ່ຢູ່ເປັນໂອກາດຂອງເຮົາແລ້ວ." ລາວກໍ່ອູ້ມເອົາລູກນ້ອຍໄປຫາປາກຖໍ້າແລ້ວຈັບຝ່າມືລູກໄປແປະໃສ່



ກ້ອນຫີນໃຫຍ່ທີ່ອັດປາກຖ້ຳຢູ່ ແລ້ວກ້ອນຫີນໃຫຍ່ກໍ່ກິ້ງອອກຢ່າງງ່າຍດາຍ.

ເມື່ອເຫັນເປັນແນວນັ້ນ ລາວກໍ່ຟ້າວເອົາລູກໄປວາງໄວ້ແລ້ວຟ້າວແລ່ນໜີ, ເມື່ອຍ່າມອຍມາບໍ່ເຫັນຜົວກໍ່ແລ່ນຊອກຫາຜົວ, "ພໍ່ໜອຍເອີຍ ພໍ່ໜອຍເອີຍ..!"





ພໍລາວໄດ້ຍິນສຽງກໍ່ເອົາຫົວຊຸບລົງຂຸມມັນ, ຍ່ານອຍໄປພົບເຫັນແມ່ນຜົວຕົນເອງຈຶ່ງຄິດວ່າ ຜົວຕົນຕາຍແລ້ວ ມັນນັ່ງໄຫ້ເຝົ້າຜົວທັງຈົ່ມ ອອກມາວ່າ: "ພໍ່ຫນອຍເອີຍ ເຈົ້າຕາຍຈາກຂ້ອຍ ໄປແລ້ວບໍ!" ມັນເວົ້າພ້ອມທັງເອົາມືໄປຄວັກງກົ້ນ ຂອງຜົວ, ຜົວກໍ່ຕົດອອກມາຄ່ອຍໆເຫມັນເຂົ້າດັງ ເນຍ, "ໂອ້..! ພໍ່ຫນອຍເຈົ້າເຫມັນແລ້ວບໍ ໃຜເດຈະ ເປັນຄູ່ເຈົ້າ ຖ້າຂ້ອຍຢູ່ນີ້ເດີຈະໄປເອົາເງິນເອົາຄຳ ມາໃຫ້ເຈົ້າໄດ້ຊື້ເຂົ້າກິນຢູ່ຕາມທາງໄປເມືອງຟ້າ ເມືອງແຖນ ຂ້ອຍຈະໄປເອົາຫມໍ້ສີ່ຫູມາໃຫ້ເຈົ້າ ແດ່" ຍ່ານອຍເວົ້າແລ້ວກໍ່ຍືນຂຶ້ນ ຊາຍຄົນນັ້ນ ຄິດໄວ້ໃນໃຈວ່າຕ້ອງເອົາຫມໍ້ໄປແທນສ່ຽວໃຫ້ໄດ້ ລາວຈຶ່ງຕອບຍ່ານອຍວ່າ: "ເອົາສອງຫນ່ວຍເດີ" ຍ່ານອຍໄດ້ຍິນເຊັ່ນນັ້ນຈຶ່ງຮ້ອງຂຶ້ນວ່າ: "ໂອ້..! ຍັງ ບໍ່ທັນຕາຍ" ມັນຈຶ່ງຈົກກົ້ນດຶງໄສ້ອອກມາກິນ.

ຊາຍຄົນນັ້ນກໍ່ຕາຍຍ້ອນຄວາມໂລບມາກໂລພາ ນີ້ແລ້ວ ເພິ່ນວ່າໂລບມາກພາໃຫ້ລາບຫາຍ ຢາກກິນຫຼາຍໄດ້ກິນ ທໍ່ກ້ອຍ, ລາວໄດ້ກາຍເປັນອາຫານຍ່າມອຍຍ້ອນຄວາມ ຢາກໄດ້ຫຼາຍເກີນຂອບເຂດຈົນເຮັດໃຫ້ຕົວເອງຕາຍ.



# ຫວັງວ່າທ່ານຈະມ່ວນຊື່ນກັບການອ່ານປຶ້ມຟຣີ ຂອງອ້າຍໜູນ້ອຍ



ປຶ້ມຂອງອ້າຍໜູນ້ອຍທີ່ໄດ້ຜ່ານການຄັດເລືອກໃຫ້ມີໃນອິນເຕີເນັດ. ຂໍເຊີນຊວນພວກທ່ານປະຕິບັດດັ່ງນີ້:

- ພິມປຶ້ມຫົວນີ້ໄວ້ອ່ານສ່ວນຕົວ;
- ພິມອອກເປັນຫຼາຍສໍາເນົາເພື່ອປະກອບການຮຽນໃນໂຮງຮຽນໃດໜຶ່ງ ຫຼື ໃນທ້ອງຖິ່ນ;
- ສົ່ງເປັນເອກະສານ ແບບ PDF ຕໍ່ໃຫ້ຄົນອື່ນໆ;
- ຕື່ມຫົວຂໍ້ໃຫ້ຄົນຕິດຕາມກ່ຽວກັບປຶ້ມເຫຼົ່ານີ້ລົງໃນ ເວັບໄຊ້ ຂອງທ່ານ. ບໍ່ຕ້ອງເຊື່ອມເຂົ້າຫາປຶ້ມໂດຍກົງ ເພາະທີ່ຢູ່ ເວັບໄຊ້ ຂອງປຶ້ມເຫຼົ່ານີ້ອາດຈະປ່ຽນແປງ. ກະລຸນາເຊື່ອມຕໍ່ເຂົ້າຫາໜ້າຫຼັກເວັບໄຊ້ ຂອງພວກເຮົາ ເຊິ່ງເປັນບ່ອນທີ່ສາມາດເບິ່ງລາຍການປຶ້ມທີ່ຈະດາວໂຫຼດໄດ້.

**ທ່ານຈະບໍ່:**

- ຈັດພິມປຶ້ມນີ້ ແລ້ວຂາຍ ຫຼື ແຈກຈ່າຍຢ່າງກວ້າງຂວາງເກີນກວ່າທີ່ໄດ້ອະນຸຍາດໄວ້ຂ້າງເທິງ ຖ້າບໍ່ໄດ້ຮັບອະນຸຍາດຈາກອ້າຍໜູນ້ອຍ.
- ເອົາປຶ້ມຂຶ້ນໜ້າ ເວັບໄຊ້. ກະລຸນາເຮັດພຽງສ້າງການເຊື່ອມຕໍ່ເຂົ້າຫາ ເວັບໄຊ້ ຂອງພວກເຮົາດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ.

ຖ້າທ່ານເປັນຄົນມັກອ່ານ ລອງຄໍານຶງເຖິງຫຼາຍຄົນໃນປະເທດລາວ ຜູ້ທີ່ບໍ່ເຄີຍເຫັນປຶ້ມຈັກເທື່ອ. ດ້ວຍການຊ່ວຍເຫຼືອຂອງທ່ານ ພວກເຮົາສາມາດເຮັດປຶ້ມອ່ານໃຫ້ເຖິງເຂົາເຈົ້າເລົ່ານັ້ນ. ຂໍຈົ່ງພິຈາລະນາສະໜັບສະໜູນການພິມປຶ້ມ ຫຼື ຊ່ວຍໃນທາງອື່ນ. ເວັບໄຊ້ຂອງພວກເຮົາມີຂໍ້ມູນເພີ່ມເຕີມລະອຽດ. ຂໍຂອບໃຈ!

# We hope you enjoyed this free book from Big Brother Mouse



Selected Big Brother Mouse books are available online.  We invite you to:
* Print this book for personal use;
* Print copies for educational use in one school or location;
* Send the PDF file to others;
* Put a notice about these books on your website. Do not link directly to a book, since these web addresses will change. Please provide a link to our main site, where people can find the updated list of books available for download.

You may not:
* Publish this book and sell or distribute it more widely that what is permitted above, without permisson from Big Brother Mouse.
* Post the full book to a website. Please post only a link to our site, as described above.

If you like to read, please think about the many people in Laos who don't yet have access to any books at all. With your help, we can make books available in every village in Laos. Please consider sponsoring a book, or helping in other ways. Our website tells more.

Thank you!

BigBrotherMouse.com



ນາງ ບົວຄຳ ແສງດາລາ (ລູກສາວເມືອງພວນ) ເກີດຢູ່ ແຂວງຊຽງຂວາງ, ປັດຈຸບັນຢູ່ນະຄອນຫຼວງວຽງຈັນ. ລາວພິການຂາສອງເບື້ອງ ແລະແຂນເບື້ອງຂວາແຕ່ອາຍຸ 7 ປີ, ຍ້ອນສົງຄາມຫວຽດນາມ ອາເມຣິກາ ໃນປີ 1969. ແຕ່ລາວກໍບໍ່ໄດ້ທໍ້ໃຈໃນຊີວິດ, ລາວມີຄວາມເບີກບານ ແລະສູ້ກັບຊີວິດດ້ວຍຮອຍຍິ້ມ, ເຫື່ອແຮງ ແລະສະຕິປັນຍາ. ລາວມັກການຂຽນມາແຕ່ຕອນຍັງນ້ອຍ. ລາວໄຝ່ຝັນຢາກເປັນນັກຂຽນທີ່ດີເດັ່ນ ແລະມີຄຸນນະພາບ. ປີ 2001 ລາວຖືກເລືອກຕັ້ງໃຫ້ເປັນຄະນະບໍລິຫານງານຂອງສະມາຄົມຄົນພິການ.

**ພວກເຈົ້າຮູ້ບໍ່ ຜີຍ່ານອຍ ມັກກິນຫຍັງ?... ມັກອາໄສຢູ່ບ່ອນໃດ?... ຜີຍ່ານອຍ ເປັນຜີປະຫຼາດຊະນິດໜຶ່ງ. ລາຍລະອຽດໃຫ້ອ່ານເບິ່ງໃນປື້ມຫົວນີ້ເດີ!**

ອ້າຍໜູນ້ອຍ ຄືກິດຈະການໃໝ່ຂອງປື້ມລາວ ອອກແບບເພື່ອເພີ່ມຄວາມຮູ້ ໃນການອ່ານ ການຂຽນໃຫ້ກວ້າງຂວາງອອກ ໂດຍມີຈຸດປະສົງຫຼັກຄື: ເຮັດໃຫ້ມ່ວນໃນການອ່ານ ແລະ ງ່າຍໃນການຮຽນ.

Big Brother Mouse makes literacy *fun* for children in Laos. You can help! Our website tells more.

www.BigBrotherMouse.com.

